# 66 ປີ ໃນການຕໍ່ສູ້ຕ້ານກັບຄວາມຮຸນແຮງ: ວິທີການເຮັດວຽກຂອງສະຫະພັນແມ່ຍິງລາວໃນການຢຸດຕິການໃຊ້ຄວາມຮຸນແຮງກັບແມ່ຍິງໃນ ສປປ ລາວ



ວັນທີ 18 ກໍລະກົດ ວັນຄົບຮອບສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 66 ປີ ສະຫະພັນແມ່ຍິງລາວ (LWU) ໄດ້ສ້າງຕັ້ງຂຶ້ນໃນປີ 1955, ເພື່ອປົກປ້ອງສິດທິຂອງແມ່ຍິງໃນ ສປປ ລາວ. ອົງການຈັດຕັ້ງມະຫາຊົນນີ້ ເປັນຕົວແທນໃຫ້ແກ່ແມ່ຍິງທຸກຄົນທີ່ສົນໃຈ ຜ່ານເຄືອຂ່າຍທົ່ວປະເທດ ທີ່ມີສະມາຊິກຫຼາຍກວ່າ 1 ລ້ານຄົນຈາກຂັ້ນສູນກາງລົງຮອດຂັ້ນບ້ານ; ທີ່ສໍາຄັນອີກອັນໜຶ່ງຄືໃນປະເທດລາວມີພົນລະເມືອງອາໃສຢູ່ເຂດຊົນນະບົດ 68%.

ສ່ວນສໍາຄັນອັນໜຶ່ງຂອງວຽກສະຫະພັນແມ່ຍິງລາວ ແມ່ນເພື່ອປົກປ້ອງສິດຂອງແມ່ຍິງພາຍໃຕ້ກົດໝາຍ, ໂດຍສະເພາະແມ່ນສິດທິການດໍາລົງຊີວິດ ປາສະຈາກຄວາມຮຸນແຮງ ແລະ ການລຶບລ້າງຄວາມຮຸນແຮງບົນພື້ນຖານທາງເພດຕໍ່ແມ່ຍິງໃນທຸກພາກສ່ວນຂອງສັງຄົມ.

ໃນປີ 2004, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງໄດ້ຖືກຮັບຮອງເອົາ, ນໍາໄປສູ່ການສ້າງບ່ອນພັກເຊົາ, ການບໍລິການຄໍາປຶກສາ ແລະ ແຜນງານຟື້ນຟູຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ. 10 ປີຕໍ່ມາ, ໃນປີ 2014, ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນ ການໃຊ້ຄວາມຮຸນແຮງຂອງແມ່ຍິງ ແລະ ເດັກນ້ອຍໄດ້ຖືກຮັບຮອງ. ກົດໝາຍສະບັບນີ້ ໄດ້ຜັນຂະຫຍາຍ

ການສະໜັບສະໜູນການໃຫ້ບໍລິການແກ່ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ຮັບປະກັນການເຂົ້າເຖິງຂອງເຂົາເຈົ້າ, ທີ່ສອດຄ່ອງກັບຄຳແນະນຳຂອງສົນທິສັນຍາວ່າດ້ວຍ ການລຶບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ.

ສະຫະພັນແມ່ຍິງລາວໄດ້ຜັນຂະຫຍາຍອອກມາເປັນແຜນຈັດຕັ້ງປະຕິບັດແນວໃດ?

ໃນຂັ້ນສູນກາງ, ສະຫະພັນແມ່ຍິງລາວໄດ້ຈັດຕັ້ງປະຕິບັດວຽກງານການສົ່ງເສີມ ເພື່ອຮັບປະກັນການປົກປ້ອງແມ່ຍິງ ຈາກຄວາມຮຸນແຮງ ໃນບ່ອນສາທາລະນະ ແລະ ບ່ອນສ່ວນບຸກຄົນ. ວຽກງານປ່ຽນແປງແນວຄິດ ກ່ຽວກັບບັນທັດຖານທາງເພດ ແລະ ຄວາມຮຸນແຮງບົນພື້ນຖານທາງເພດແບບດັ້ງເດີມ ໂດຍຜ່ານການປຸກລະດົມໃນລະດັບຊາດ. ໄດ້ມີການກຳນົດຂົງເຂດໃນການປັບປຸງ ແລະ ສ້າງຄວາມອາດສາມາດ ເພື່ອຮັບປະກັນໃຫ້ບັນດາກະຊວງ ແລະ ຄູ່ຮ່ວມງານ ປະຕິບັດຕາມພະລາບົດບາດຂອງເຂົາເຈົ້າ ໃນການຕໍ່ຕ້ານກັບຄວາມຮຸນແຮງບົນພື້ນຖານທາງເພດ ໃນ ສປປ ລາວ.

ທ່ານ ນ. ສຸກພາພອນ ພານິດ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ ສະຫະພັນແມ່ຍິງໄດ້ກ່າວວ່າ. "ການປົກປ້ອງແມ່ນເລີ່ມຈາກຄວາມເຂົ້າໃຈ ຄວາມໝາຍຂອງຄວາມຮຸນແຮງ, ແຕ່ຫຼາຍຄົນຄິດວ່າ ຄວາມຮຸນແຮງ ເປັນພຽງແຕ່ຄວາມຮຸນແຮງທີ່ເກີດຂຶ້ນດ້ວຍການທຳຮ້າຍທາງຮ່າງກາຍ". ທ່ານ ນ. ສຸກພາພອນໄດ້ກ່າວຕື່ມວ່າ, "ມັນເປັນໜຶ່ງໃນໜ້າວຽກຂອງສະຫະພັນແມ່ຍິງລາວ ເພື່ອໃຫ້ແນ່ໃຈວ່າທຸກໆຄົນ, ບໍ່ແມ່ນພຽງແຕ່ຜູ້ຍິງເທົ່ານັ້ນ, ແຕ່ຍັງລວມທັງຜູ້ຊາຍ ແລະ ຜູ້ໃຫ້ບໍລິການທັງໝົດ ແມ່ນຕ້ອງ ຮັບຮູ້ເຖິງສິດທິຂອງແມ່ຍິງທີ່ດຳລົງຊີວິດຢູ່ ໂດຍປາສະຈາກຄວາມຮຸນແຮງ".

ກົດໝາຍວ່າດ້ວຍການປ້ອງກັນ ແລະ ການຕໍ່ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ໄດ້ກຳນົດຄວາມຮຸນແຮງອອກເປັນສີ່ຮູບແບບ: ທາງຮ່າງກາຍ, ທາງເພດ, ທາງດ້ານຈິດໃຈ ແລະ ດ້ານເສດຖະກິດ; ໝາຍຄວາມວ່າພາຍໃຕ້ກົດໝາຍແລ້ວ, ແມ່ຍິງບໍ່ຈຳເປັນຕ້ອງຍອມຮັບກັບຄວາມຮຸນແຮງທາງດ້ານຮ່າງກາຍ ຫຼື ການປະພຶດທີ່ກໍ່ໃຫ້ເກີດການເສື່ອມເສຍຕໍ່ຊື່ ສຽງ, ກຽດສັກສີ ຫຼື ຄວາມສັດທາຕໍ່ຕົນເອງ. ການລະເມີດສິດທິທາງເພດຂອງແມ່ຍິງ ຫຼື ຄວາມເປັນເອກະລາດທາງເສດຖະກິດ ຖືວ່າເປັນການກະທຳທີ່ກໍ່ໃຫ້ເກີດຄວາມຮຸນແຮງ.

ໂດຍພື້ນຖານແລ້ວ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ (ສູນໃຫ້ຄຳປຶກສາ) ໃຫ້ການຊ່ວຍເຫຼືອ ແລະ ທີ່ພັກອາໄສໃຫ້ແກ່ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງທັນທີ. ເມື່ອແມ່ຍິງໄດ້ຮ້ອງຂໍຄວາມຊ່ວຍເຫຼືອ, ທາງສູນຈະໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ, ເສດຖະກິດ ແລະ ສະໜັບສະໜູນທາງດ້ານຈິດໃຈ ນອກຈາກນັ້ນ ຍັງໃຫ້ການຊ່ວຍເຫຼືອໃຫ້ກັບສູ່ຄອບຄົວ ແລະ ສັງຄົມຫຼັງຈາກປະສົບກັບການຖືກໃຊ້ຄວາມຮຸນແຮງ. ແມ່ຍິງບາງຄົນກໍ່ເຂົ້າໄປສູນໂດຍກົງ ເພື່ອຂໍຄວາມຊ່ວຍເຫຼືອ ແຕ່ແມ່ຍິງສ່ວນຫຼາຍແລ້ວຈະບໍ່ໄດ້ເຂົ້າໄປຂໍຄວາມຊ່ວຍເຫຼືອເອງ ສ່ວນຫຼາຍຈະແມ່ນແພດໝໍເປັນຜູ້ແນະນຳມາເພາະເພິ່ນ ຮູ້ດີວ່າສິ່ງທີ່ຄົນເຈັບຕ້ອງການແມ່ນຫຼາຍກວ່າຊ່ວຍເຫຼືອທາງການແພດ.

ສິ່ງທີ່ໜ້າເສົ້າໃຈ, ມີຕົວເລກລາຍງານໃນປີ 2015 ມີພຽງແຕ່ 2% ຂອງຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໄດ້ຂໍການຊ່ວຍເຫຼືອ. ຄວາມຮຸນແຮງຕໍ່ແມ່ຍິງ ຍັງເປັນທີ່ຍອມຮັບຢູ່ໃນສັງຄົມລາວ ແລະ ຜູ້ຍິງສ່ວນຫຼາຍບໍ່ກ້າທີ່ຈະເວົ້າອອກມາ, ຢ້ານກົວຕໍ່ການດູຖູຢຽບຢ່ຳຕໍ່ບັນຫາທີ່ເກີດຂຶ້ນຈາກຊຸມຊົນທີ່ໂຕເອງຢູ່.

ໃນ ສປປ ລາວ ປະກອບມີ 50 ກຸ່ມຊົນເຜົ່າທີ່ມີພາສາ ແລະ ວັດທະນະທຳທີ່ແຕກຕ່າງກັນ, ການປ່ຽນແປງພຶດຕິກຳ ແລະຄວາມຮັບຮູ້ຕໍ່ກັບການໃຊ້ຄວາມຮຸນແຮງເປັນສິ່ງທີ່ທ້າທາຍໃນການລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ການສຳຫຼວດດັດຊະນີໝາຍສັງຄົມລາວ ປີ 2018 ໄດ້ລາຍງານວ່າຜູ້ຊາຍ 16% ເຊື່ອວ່າຜົວມີຄວາມຖືກຕ້ອງໃນການຕີເມຍຂອງຕົນເມື່ອລາວບໍ່ປະຕິບັດຕາມຄວາມຄາດຫວັງຂອງສັງຄົມ. ແມ່ຍິງຈຳນວນ 30% *ເຫັນດີນຳ.* ໃນປີ 2012 ໄດ້ມີລາຍງານວ່າ ຜູ້ຊາຍຈຳນວນ 49% ເຊື່ອວ່າເປັນເລື່ອງທີ່ຍອມຮັບໄດ້ໃນການໃຊ້ຄວາມຮຸນແຮງຕໍ່ເມຍ ແລະ ແມ່ຍິງຈຳນວນ 58% ກໍ່ຄິດວ່າເປັນເລື່ອງທີ່

ຮັບໄດ້. ເປັນທີ່ຊັດເຈນວ່າທີ່ຜ່ານມາໄດ້ມີຄວາມກ້າວໜ້າໃນການປະຕິບັດວຽກງານ, ແຕ່ກະຍັງມີອີກຫຼາຍຢ່າງທີ່ຕ້ອງໄດ້ປະຕິບັດເພື່ອຍຸຕິຄວາມຮຸນແຮງບົນພື້ນຖານທາງເພດຕໍ່ແມ່ຍິງ.

ໃນລະຫວ່າງໄລຍະທີສອງຂອງການລະບາດ COVID-19, ສປປ ລາວໄດ້ປິດການເຂົ້າ-ອອກ (Lockdown) ຢ່າງເຂັ້ມງວດ ໃນທ້າຍເດືອນເມສາ 2021 ແລະ ມີແມ່ຍິງຫຼາຍຄົນ ໄດ້ຖືກກັກຂັງກັບຜູ້ລວງລະເມີດ. ໃນເດືອນທີ່ສາມ, ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກ ໄດ້ຮັບລາຍງານໂດຍການໂທເຂົ້າສາຍດ່ວນ ເພື່ອ ຂໍຄວາມຊ່ວຍເຫຼືອຈາກສາຍດ່ວນ ແລະ ມີຜູ້ຮ້ອງຂໍຄຳປຶກສາເລື່ອງອື່ນໆ ແລະ ເລື່ອງຄວາມປອດໄພໃນບ່ອນພັກອາໄສເພີ້ມຂຶ້ນ.

ທ່ານ ນ. ບຸນເຫຼືອ ຈັນທະພິມມາ, ຜູ້ອຳນວຍການ ສູນໃຫ້ຄຳປຶກສາປົກປ້ອງແມ່ຍິງ ແລະ ເດັກນ້ອຍໄດ້ກ່າວວ່າ "ນອກເໜືອຈາກການໃຫ້ການຊ່ວຍເຫຼືອ, ພວກເຮົາຕ້ອງເອົາໃຈໃສ່ຢ່າງເທົ່າທຽມກັນໃນການເຜີຍແຜ່ຄວາມຮູ້ກ່ຽວກັບສິດທິຂອງແມ່ຍິງຕໍ່ກັບກຽດສັກສີ ແລະ ການປົກປ້ອງຈາກຮູບແບບຄວາມຮຸນແຮງ ແລະ ການຈຳແນກທຸກຮູບແບບ – ເພາະວ່າຊີວິດຂະເຈົ້າຈະບໍ່ຄືເກົ່າເມື່ອພວກເຂົາລອດຈາກການໃຊ້ຄວາມຮຸນແຮງ".

ສະຫະພັນແມ່ຍິງລາວ, ໄດ້ຮັບການສະໜັບສະໜູນຈາກອົງການຮ່ວມມືສາກົນປະເທດເກົາຫຼີ (KOICA), ອົງການະສຫະປະຊາຊາດກອງທຶນເພື່ອປະຊາກອນ (UNFPA), ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ອົງການທີ່ບໍ່ສັງກັດລັດຖະບານ (NGOs) ຈາກປະເທດເກົາຫຼີ: ເທັກທີນ (Tacteen Naeil) ແລະ KDS, ໄດ້ເຮັດວຽກຮ່ວມກັນ ເພື່ອຮັບປະກັນໃຫ້ມີການປະສານງານທີ່ດີ ແລະ ການໃຫ້ບໍລິການແກ່ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃຫ້ມີຄຸນນະພາບ. "ພາກສ່ວນດຽວບໍ່ສາມາດເຮັດວຽກດ້ວຍຕົນເອງໄດ້ ແລະ ທຸກການບໍລິການຕ້ອງເຮັດວຽກຢ່າງກົມກຽມ, ພາຍໃຕ້ຄັນຮົ່ມອັນດຽວກັນໃນການປົກປ້ອງແມ່ຍິງຈາກຄວາມຮຸນແຮງ," ທ່ານ ນ. ສຸກພາພອນໄດ້ກ່າວ. ຄວາມຫວັງກໍ່ຄື ມື້ໜຶ່ງ, ສະຫະພັນແມ່ຍິງລາວຈະສາມາດສຸມໃສ່ການປ້ອງກັນກໍລະນີຕ່າງໆ ກ່ອນທີ່ມັນຈະເກີດຂຶ້ນ, ແທນທີ່ຈະມາແກ້ຜົນສະທ້ອນທີ່ຕາມມາ. ແລະ ໃນຂະນະທີ່ມີຫຼາຍກໍລະນີຄວາມຮຸນແຮງເກີດຂຶ້ນພາຍໃນຄອບຄົວ, ສະຫະພັນແມ່ຍິງຈະສືບຕໍ່ເຮັດວຽກອີ ກຫຼາຍ 66 ປີເພື່ອເຮັດໃຫ້ບັນຫານີ້ເປັນທີ່ຮັບຮູ້ ແລະ ໃຫ້ແມ່ຍິງລາວມີຄວາມສຸກກັບຊີຊິດທີ່ປາສະຈາກຄວາມຮຸນແຮງ

*ຖ້າຫາກທ່ານປະສົບກັບຄວາມຮຸນແຮງ ແລະ ຕ້ອງການຂໍຄວາມຊ່ວຍເຫຼືອ, ກະລຸນາຕິດຕໍ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງສະຫະພັນແມ່ຍິງລາວທີ່ເບີໂທ #1362 ຫຼື ຕິດຕໍ່ຜ່ານ ວອດແອບ WhatsApp: 020 2324 1362; 020 2252 1362; 020 2326 1362; 020 5554 1362; 020 5557 1362; 020 5558 1362.*